**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

**ນາຍົກລັດຖະມົນຕີ**

ເລກທີ 05 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 16 ມັງກອນ 2023

# ດຳລັດ
# ວ່າດ້ວຍການຮັບຮອງ ແລະ ປະກາດໃຊ້
# ສາລະບານສິນຄ້າລະບົບເອກະພາບຂອງອາຊຽນ ລຸ້ນປີ 2022 (AHTN 2022)

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບປັບປຸງ ເລກທີ 03/ສພຊ, ລົງວັນທີ 16 ພະຈິກ 2021;
- ອີງຕາມ ກົດໝາຍ ວ່າດ້ວຍພາສີ ສະບັບປັບປຸງ ເລກທີ 81/ສພຊ, ລົງວັນທີ 29 ມິຖຸນາ 2020;
- ອີງຕາມ ເອກະສານລາຍງານ ສະບັບເລກທີ 3970/ກງ, ລົງວັນທີ 13 ທັນວາ 2022 ຂອງກະຊວງການເງິນ.

## ນາຍົກລັດຖະມົນຕີ ອອກດຳລັດ:

**ມາດຕາ 1** ເຫັນດີຮັບຮອງ ແລະ ປະກາດໃຊ້ສາລະບານສິນຄ້າລະບົບເອກະພາບ ອາຊຽນ ລຸ້ນປີ 2022 (AHTN 2022), ຊຶ່ງປະກອບມີ 21 ພາກ, 97 ໝວດ, ມີທັງໝົດ 11,414 ລະຫັດ ເພື່ອປ່ຽນແທນ ສາລະບານສິນຄ້າລະບົບເອກະພາບ ຂອງອາຊຽນ ລຸ້ນປີ 2017 (AHTN 2017) ທີ່ປະກາດໃຊ້ ໂດຍດຳລັດ ສະບັບເລກທີ 122/ນຍ, ລົງວັນທີ 03 ເມສາ 2018.

**ມາດຕາ 2** ມອບໃຫ້ກະຊວງການເງິນ ເປັນເຈົ້າການປະສານສົມທົບກັບບັນດາກະຊວງ, ອົງການລັດທຽບເທົ່າກະຊວງ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນກ່ຽວຂ້ອງ ຈັດຕັ້ງຜັນຂະຫຍາຍສາລະບານສິນຄ້າລະບົບເອກະພາບ ອາຊຽນ ລຸ້ນປີ 2022 (AHTN 2022) ເພື່ອຮັບປະກັນ ການຈັດຕັ້ງປະຕິບັດໃຫ້ສອດຄ່ອງກັບຫຼັກການຂອງສາກົນ ແລະ ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ ໃຫ້ມີປະສິດທິພາບ ແລະ ມີປະສິດທິຜົນ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ໃຫ້ການຮ່ວມມື ເພື່ອຈັດຕັ້ງປະຕິບັດດຳລັດສະບັບນີ້ ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ນາຍົກລັດຖະມົນຕີ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ນາຍົກລັດຖະມົນຕີ

**ສອນໄຊ ສີພັນດອນ**